**Appendix A to Part 92—Sample Notice Informing Individuals About Nondiscrimination and Accessibility Requirements and Sample Nondiscrimination Statement:**

**Discrimination is Against the Law**

Diagnostic Eye Center ປະຕິບັດຕາມກົດໝາຍວ່າດ້ວຍສິດທິພົນລະເມືອງຂອງຣັຖບານກາງທີ່ບັງຄັບໃຊ້ ແລະບໍ່ຈຳແນກບຸກຄົນໂດຍອີງໃສ່ພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ອາຍຸ, ຄວາມພິການ, ຫຼືເພດ. Diagnostic Eye Center ບໍ່ຈຳແນກບຸກຄົນ ຫຼືປະຕິບັດຕໍ່ພວກເຂົາໂດຍແຕກຕ່າງດ້ວຍເຫດຜົນດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ອາຍຸ, ຄວາມພິການ, ຫຼືເພດ.

Diagnostic Eye Center:

- ໃຫ້ການຊ່ວຍເຫຼືອ ແລະການບໍລິການໂດຍບໍ່ເສັຽຄ່າແກ່ບຸກຄົນທີ່ພິການເພື່ອໃຫ້ສາມາດສື່ສານກັບພວກເຮົາໄດ້ຢ່າງມີປະສິດທິພາບ, ເຊັ່ນ:
  - ນາຍພາສາໃບ້ທີ່ມີຄຸນສົມບັດເໝາະສົມ
  - ຂໍ້ມູນທີ່ເປັນລາຍລັກອັກສອນໃນຮູບແບບອື່ນໆ (ເຊັ່ນ ຕົວພິມໃຫຍ່, ເທັບບັນທຶກ, ຮູບແບບອີເລັກໂຕຣນິກທີ່ເຂົ້າເຖິງໄດ້, ຮູບແບບອື່ນໆ)
- ໃຫ້ບໍລິການດ້ານພາສາໂດຍບໍ່ເສັຽຄ່າແກ່ບຸກຄົນທີ່ພາສາຫຼັກຂອງເຂົາເຈົ້າບໍ່ແມ່ນພາສາອັງກິດ, ເຊັ່ນ:
  - ນາຍພາສາທີ່ມີຄຸນສົມບັດເໝາະສົມ
  - ຂໍ້ມູນທີ່ຂຽນໃນພາສາອື່ນ

ຖ້າວ່າທ່ານຕ້ອງການບໍລິການເຫຼົ່ານີ້, ຈົ່ງຕິດຕໍ່ Victoria Wheeler

ຖ້າວ່າທ່ານເຊື່ອວ່າ Diagnostic Eye Center ບໍ່ໃຫ້ການບໍລິການເຫຼົ່ານີ້ ຫຼືຈຳແນກໃນທາງອື່ນໂດຍອີງໃສ່ພື້ນຖານດ້ານເຊື້ອຊາດ, ສີຜິວ, ຊາດກຳເນີດ, ອາຍຸ, ຄວາມພິການ, ຫຼືເພດ, ທ່ານສາມາດຍື່ນເລື່ອງຮ້ອງທຸກກັບ:

Victoria Wheeler, Office Coordinator

3405 Edloe St, Ste 300

Houston, TX 77027

713-797-1500

713-797-1150 Fax

victoria@diagnosticeyecenter.com

ທ່ານສາມາດຍື່ນເລື່ອງຮ້ອງທຸກດ້ວຍຕົນເອງ ຫຼືໂດຍທາງຈົດໝາຍ, ແຟກຊ໌, ຫຼືອີເມວ. ຖ້າວ່າທ່ານຕ້ອງການຄວາມຊ່ວຍເຫຼືອໃນການປະກອບຄຳຮ້ອງທຸກ, Victoria Wheeler ແມ່ນພ້ອມຊ່ວຍເຫຼືອທ່ານ.

ນອກຈາກນີ້ ທ່ານຍັງສາມາດຮ້ອງທຸກດ້ານສິດທິພົນລະເມືອງໄດ້ກັບທາງ U.S. Department of Health and Human Services (ກະຊວງປະຊາສົງເຄາະແລະສຸຂະພາບຂອງສະຫະຣັຖ), Office for Civil Rights (ຫ້ອງການສິດທິພົນລະເມືອງ), ໂດຍທາງອີເລັກໂຕຣນິກຜ່ານ Office for Civil Rights Complaint Portal, ຊຶ່ງມີໃຫ້ທີ່ເວັບໄຊ https://ocrportal.hhs.gov/ocr/portal/lobby.jsf, ຫຼືໂດຍທາງໄປສະນີ ຫຼືທາງໂທຣະສັບທີ່:

U.S. Department of Health and Human Services
200 Independence Avenue, SW
Room 509F, HHH Building
Washington, D.C. 20201
1-800-868-1019, 800-537-7697 (TDD)

ຟອມຄຳຮ້ອງທຸກມີໃຫ້ທີ່ເວັບໄຊ http://www.hhs.gov/ocr/office/file/index.html.